# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 18 ທັນວາ ໒005 ( 18-1໒-໒005 )

---

## <u>ເປັນຫຍັງຈື່ງຕ້ອງພະຍາຍາມ</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** ( ໂຣມ 15: 14-໒4 ; 30-3໒ )

**<u>ພຣະຄັມພີແຫ່ງຄວາມຈິງ:</u>** ເພື່ອຊ່ວຍໃຫ້ທ່ານໄດ້ຫມູນໃຊ້ຂ່າວປະເສີດ, ຜູ້ທີ່ເຊື່ອຈະມີພະລັງອຳນາດໃນການທີ່ຈະເຮັດໃຫ້ຄວາມແຕກຕ່າງເກີດຂື້ນໃນໂລກໄດ້.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ຖືກແຕ່ງຂື້ນມາເພື່ອຊ່ອຍທ່ານໃຫ້ມີຄວາມຫ່ວງໃຍທີ່ເກີດຂື້ນຢູ່ໃນຕົວທ່ານເອງເພື່ອທີ່ຈະເຮັດໃຫ້ພຣະປະສົງໃນພາຣະກິດຂອງພຣະຄຣິດໃຫ້ໄດ້ຮັບຜົນສຳເຣັດດ້ວຍ:

* ອະທິບາຍວິທີທາງຂອງອັຄສາວົກໂປໂລໄດ້ຫມູນໃຊ້ຂ່າວປະເສີດໃຫ້ໄປເຖີງຄົນທົ່ວໂລກ: ແລະ
* ທີ່ຈະເລືອກເອົາວິທີທາງທີ່ຈະຊ່ວຍທ່ານໃຫ້ນຳມາຫມູນໃຊ້ຂ່າວປະເສີດໃຫ້ໄປເຖີງຄົນທົ່ວໂລກ.

## <u>ເປັນຫຍັງຂ້າພະເຈົ້າຈື່ງຕ້ອງເຊື່ອວ່າສາມາດເຮັດໃຫ້ມີຄວາມແຕກຕ່າງໃນໂລກໄດ້?</u>

" ພວກເຮົາຈະເອົາຊະນະຕໍ່ຄົນຝ່າຍໂລກໃນສມັຍໃຫມ່ນີ້ເພື່ອທີ່ຈະນຳເຂົາມາເຖີງພຣະຄຣິດໄດ້! "ໃນຖານະທີ່ຂ້າພະເຈົ້າປັນຄົນຫນຸ່ມນ້ອຍຜູ້ນຶ່ງຖ້າຈະຄິດໄລ່ຄຳນວນເບິ່ງຈຳນວນຜູ້ທີ່ເຊື່ອໃນແຕ່ລະປີ, ຈະບອກໄດ້ຢ່າງຊັດເຈນວ່າໃນປີ 1990, ຈຳນວນສາວົກທັງຫມົດຈະສາມາດເອົາຊະນະຄືທີ່ຈະນຳຄົນທຸກຄົນໃນໂລກມາຫາພຣະຄຣິດໄດ້. ແຕ່ແນ່ນອນການຄຳນວນນັ້ນຜົນອອກມາບໍ່ເປັນໄປຕາມທີ່ຄາດຫວັງໄວ້, ແຕ່ຕາມສະຖິຕິແລ້ວໃນຫລາຍປີຜ່ານມາກໍມີຄົນຮັບເອົາພຣະຄຣິດເປັນຈຳນວນຫລວງຫລາຍແລ້ວເຊັ່ນກັນແລະກໍໄດ້ປ່ຽນຊີວິດໃຫ້ເປັນຫມາກຜົນຄືຊີວິດອັນຕລອດໄປເປັນນິດ.

ໂລກນີ້ຈະມີແສງສວ່າງແລະເປັນຜູ້ຊອບທັມທັງຫມົດໄດ້ຈົນກວ່າພຣະຄຣິດຈະສເດັດກັບມາ " ໃນວັນພິພາສາຕັດສິນມະນຸດທີ່ຜູ້ທີ່ບໍ່ເຊື່ອໃນພຣະເຈົ້າ " ຈະພົບບັນທຶກໄວ້ໃນ ( ໒ ປຕ. 3: ໗ ). ແຕ່ຈົນກວ່າຈະເຖີງວັນນັ້ນ, ຫນ້າທີ່ພວກເຮົາຄືຈະຕ້ອງໃຊ້ຂອງພຣະຣາຊທານ (ກຈກ 1:8 ) ໃນການເປັນ "ພະຍານ" ແລະມີຄວາມເຊື່ອຫມັ້ນໃນການທີ່ຈະຮັບເອົາຂ່າວປະເສີດແລະຈະມີຄວາມສາມາດໃນການປະກາດໃຫ້ແກ່ອີກຫລາຍຄົນທີ່ຍັງບໍ່ເຊື່ອ, ກັບໃຈໃຫມ່ແລະເປັນແສງສວ່າງເພື່ອຈຸດປະສົງຂອງພຣະເຈົ້າຈະໄດ້ສຳເຣັດ.

## <u>ສຶກສາພຣະຄັມພີ:</u>

### 1. <u>ຈຸດປະສົງຂອງທ່ານ</u> (ໂຣມ 15: 14-16)

ໃນຈົດຫມາຍທີ່ຂຽນໄປເຖີງກຸງໂຣມ, ໂປໂລໄດ້ອະທິບາຍຢ່າງແຈ່ມແຈ້ງໃນເຣື່ອງຂ່າວປະເສີດແລະໄດ້ເຊີນຊວນໃຫ້ຜູ້ອ່ານທັງຫລາຍໃຫ້ມີສ່ວນໃນການແບ່ງປັນແກ່ຄົນອື່ນ ໆ. ໄດ້ຂຽນເຖີງຜົນຂອງຄວາມບາບໄດ້ເຮັດໃຫ້ມີການຕັດສິນ, ການວາຍພຣະຊົນຂອງພຣະຄຣິດເພື່ອເປັນເຄື່ອງຖວາຍບູຊາແລະພຣະວິນຍານບໍຣິສຸດທີ່ສະຖິດຢູ່ນຳພວກເຮົາແມ່ນຫມາຍເຖີງການຊົງປ່ຽນແປງໃຫມ່ແລ້ວ, ແລະເປົ້າຫມາຍທີ່ວາງໄວ້ຄືພວກເຮົາໄດ້ຖືກເອີ້ນຈາກພຣະເຈົ້າ. ພວກເຮົາ " ເປັນຜູ້ແທນແລະຖືກສ້າງໃຫມ່ໃຫ້ເປັນລັກສະນະຂອງພຣະບຸດ " ( ໂຣມ 8:໒9 ). ພຣະຄຣິດຊົງກ່າວວ່າ *"ພຣະບິດາຊົງໃຊ້ເຮົາມາສັນໃດ, ເຮົາກໍຈະໃຊ້ທ່ານໃຫ້ໄປສັນນັ້ນ "* ( ໂຢຮັນ ໒0:໒1 ). ນໍຣະດົກທີ່ຄຣິສຕຽນໄດ້ຮັບແລະຕີຄວາມຫມາຍເຖີງເປົ້າຫມາຍໃນການອອກໄປຮັບໃຊ້ໃນການປະກາດ.

ໂປໂລໄດ້ຍ້ອງຍໍພີ່ນ້ອງຄຣິສຕຽນຢູ່ກຸງໂຣມທີ່ບໍຣິບູນໄປດ້ວຍຄວາມດີແລະຄວາມຮູ້ທຸກຢ່າງ. ການທີ່ເປັນຢ່າງນີ້ບໍ່

ແມ່ນນິສັຍຫລືປະເພນີແຕ່ເປັນດ້ວຍຣິດເດດຂອງພຣະວິນຍານ. ໂປໂລຕ້ອງການໃຫ້ຄົນຕ່າງຊາດໄດ້ຮັບພຣະພອນຄືຄວາມລອດພົ້ນທີ່ຈະຊົງປະທານໃຫ້ເຫມືອນກັນ, ແລະຂໍໃຫ້ມີການເສັຽສະລະອັນສູງສົ່ງຄືການຖວາຍໃນການແບ່ງປັນໃຫ້ຄົນອື່ນໆດ້ວຍ. ໂດຍຖວາຍຮ່າງກາຍເປັນເຄື່ອງບູຊາທີ່ມີຊີວິດ( ໂຣມ 12:1 ), ດ້ວຍການນະມັສການດ້ວຍວິນຍານຈິດ. ພຣະເຈົ້າມີພຣະປະສົງຢ່າງນີ້ໄວ້ສຳລັບທຸກຄົນແລະພວກເຮົາກໍຕ້ອງໄດ້ຮັກສາຄຳສັນຍານີ້ໄວ້ດ້ວຍໃຈ, ຈິດວິນຍານແລະກຳລັງທັງຫມົດໃນການແບ່ງປັນຂ່າວປະເສີດກັບຄົນອື່ນ. ຜູ້ທີ່ເຊື່ອຈະສາມາດເຮັດໃຫ້ມີຄວາມແຕກຕ່າງໃນເມື່ອພວກເຮົາຫາກມອບໃຫ້ພຣະເຈົ້າໃຊ້ເຮົາເພື່ອເປົ້າຫມາຍຂອງພຣະອົງຈະໄດ້ສຳເຣັດຢ່າງສົມບູນ.

## 2. <u>ອຳນາດຂອງທ່ານ</u> ( ໂຣມ15: 17-19 )

ໂປໂລໄດ້ເວົ້າເຖິງການປະກາດຂ່າວປະເສີດທີ່ບໍ່ໄດ້ມີການຄໍ້າປະກັນທາງດ້ານເງິນຊ່ວຍເຫລືອ, ແທນສິ່ງນີ້ດ້ວຍການກ່າວອ້າງເຖິງອິດທິຣິດແລະຫມາຍສຳຄັນຂອງພຣະເຈົ້າ. ໄດ້ອະທິບາຍເຖິງຄົນຕ່າງຊາດທີ່ມີການຕອບສນອງຕໍ່ການປະກາດຂ່າວປະເສີດໃນເວລາທີ່ພຣະຄຣິດໄດ້ກະທຳການອັສຈັນຜ່ານເພິ່ນເອງ.ຈົດຫມາຍໄປເຖິງຊາວເມືອງໂກຣິນໂທເພິ່ນກໍຂຽນຄ້າຍຄືກັນຄື: "*ເພາະຂ້າພະເຈົ້າຕັ້ງໃຈວ່າຈະບໍ່ສະແດງຄວາມຮູ້ເຣື່ອງໃດໆ ໃນຫມູ່ພວກທ່ານເລີຍເວັ້ນແຕ່ເຣື່ອງພຣະເຢຊູຄຣິດແລະການທີ່ພຣະອົງຊົງຖືກຄຶງທີ່ໄມ້ກາງແຂນ..ຄຳເວົ້າແລະຄຳເທສນາຂອງຂ້າພະເຈົ້າບໍ່ແມ່ນຄຳທີ່ເກັ້ຽກ່ອມດ້ວຍສະຕິປັນຍາ ແຕ່ເປັນຄຳຊຶ່ງໄດ້ສະແດງດ້ວຍຣິດອຳນາດຂອງພຣະວິນຍານ*" ( 1 ກຣທ 2:2-4 ).

ໃນໂບດຂອງຂ້າພະເຈົ້າທີ່ປະເທດສິງກະໂປ, ຜູ້ທີ່ເຊື່ອຜູ້ນຶ່ງຊຶ່ງເປັນຄົນເບຣຊຽວແລະຂ້າພະເຈົ້າໄດ້ມີການສົນທະນາກັນໃນເຣື່ອງຣິດອຳນາດຂອງຂ່າວປະເສີດທີ່ໄດ້ຊ່ວຍຄົນທຸກຊາດໃຫ້ໄດ້ພົ້ນ. ເພື່ອນແລະຂ້າພະເຈົ້າມີຄວາມເຫັນກົງກັນເພາະມີຄວາມມະຫັສຈັນເກີດຂຶ້ນທີ່ພຣະເຈົ້າໄດ້ຊົງເລືອກໃຊ້ພວກເຮົາທັງສອງ, ຄືເຮັດແນວໃດຄົນທັງຫລາຍທີ່ມາຈາກທົ່ວສາຣະທິດໄດ້ຍອມສາລະພາບບາບຂອງພວກເຂົາ ແລະຍອມຮັບເອົາຄວາມຈິງໃນເຣື່ອງຂ່າວປະເສີດດ້ວຍການເລົ່າເຣື່ອງງ່າຍໆ ຂອງພຣະເຢຊູໄທນາຊາເຣັດ. ແຕ່ສິ່ງນີ້ໄດ້ຕອບສນອງຢ່າງຫນ້າອັສຈັນຈາກຄົນຕໍ່ຄົນທີ່ໄດ້ເປັນພະຍານແລະເປັນຫລັກຖານທີ່ຍິ່ງໃຫຍ່ຂອງຄວາມຈິງໃນຂ່າວປະເສີດ. ຣິດອຳນາດຂອງພຣະເຈົ້າໄດ້ຊົງເຈີມໃນການປະກາດແລະຄວາມເຊື່ອທີ່ໄດ້ແບ່ງປັນໃນເຣື່ອງຂ່າວປະເສີດຂອງພຣະຄຣິດ.

ຍ້ອນຫມາຍສຳຄັນແລະສິ່ງມະຫັສຈັນເປັນແຮງຫມູນໃຈ ໃຫ້ອັຄສາວົກແລະຜູ້ປະກາດໄດ້ຮັບເອົາພຣະພອນຄືຄວາມຈິງຂອງພຣະເຈົ້າ. ການປະກາດຂອງພຣະຄຣິດບອກວ່າຜູ້ທີ່ຕິດຕາມພຣະອົງ " ຈະໄດ້ເຮັດສິ່ງທີ່ໃຫຍ່ກວ່າ" ສິ່ງທີ່ພຣະອົງເຮັດອີກ ( ຢຮ 14:12 ). ພຣະອົງຊົງຫມາຍເຖິງການມະຫັສຈັນໃນການປິ່ນປົວແຕ່ເປັນສິ່ງທີ່ໃຫຍ່ກວ່ານັ້ນຄືເຣື່ອງການ ໄດ້ຮັບພຣະພອນໃນເຣື່ອງປະກາດຂ່າວປະເສີດ: ຄືພວກອັຄສາວົກຈະໄດ້ເຫັນສິ່ງເຫລົ່ານີ້ຫລາຍກວ່າທີ່ພຣະອົງໄດ້ເຮັດ. ສິ່ງມະຫັສຈັນທີ່ພວກອັຄສາວົກໄດ້ສະແດງໃຫ້ເຫັນແມ່ນເປັນການເປີດໂອກາດທີ່ຈະມີການເທສນາສັ່ງສອນຂ່າວປະເສີດດ້ວຍ ( ກຈກ 3: 16 ). ຜູ້ປະກາດມີຄວາມກະຕືລືລົ້ນທີ່ຈະໄດ້ເຫັນຄົນທັງຫລາຍກັບໃຈໃຫມ່ແລະເຊື່ອໃນພຣະຄຣິດ. ຄວາມຍິ່ງໃຫຍ່ທີ່ພຣະອົງຊົງກ່າວເຖິງກໍຄືຣິດອຳນາດຂອງພຣະວິນຍານຂອງພຣະເຈົ້າໄດ້ຊົງບັນດານໃຫ້ຈິດໃຈຂອງຄົນທັງຫລາຍ, ຊຶ່ງມີຜົນເຮັດໃຫ້ພວກເຂົາຍອມສາລະພາບ ( ຢຮ16: 8-11 ).

ພຣະເຈົ້າຍັງຄົງສຳແດງຣິດອຳນາດໃຫ້ເຫັນຄືໂດຍຜ່ານສິ່ງມະຫັສຈັນທີ່ໄດ້ເກີດຂຶ້ນໃຈການປິ່ນປົວ. ແລະກໍເປັນເຫດຜົນທີ່ເຮັດໃຫ້ຄວາມເຊື່ອເຂັ້ມແຂງຂຶ້ນຄືໃນການອະທິຖານເພື່ອຜູ້ທີ່ເຈັບໄຂ້ແລະແນະນຳຜູ້ທີ່ມີບັນຫາ, ຜູ້ທີ່ຊອກຫາທີ່ເພິ່ງ " ປິ່ນປົວຈິດໃຈທີ່ແຕກຫັກ " ( ອຊຢ 61: 1 ) ແຕ່ບໍ່ໄດ້ຫມາຍຄວາມວ່າທາງດ້ານຮ່າງກາຍຈະຖືກປິ່ນປົວນຳທຸກເທື່ອ. ໂປໂລມີການເຈັບປ່ວຍທາງດ້ານຮ່າງກາຍຊຶ່ງບໍໄດ້ຮັບການປິ່ນປົວຕົວຢ່າງຄືຕົວເພິ່ນເອງ. ຄືໃນຄວາມອ່ອນແຮງນັ້ນພຣະເຈົ້າໄດ້ຊົງປະທານຄວາມເຂັ້ມແຂງໃຫ້ ( ກຣທ 12: 7-10 ). ໃນຄັ້ງທີ່ໂປໂລເຈັບປ່ວຍຄັ້ງແລກໃນເວລາທີ່ໄປຢ້ຽມຢາມທີ່ເມືອງຄາລາເຕັຽ, ແລະເພິ່ນກໍໄດ້ສະແດງອອກໃຫ້ພີ່ນ້ອງໄດ້ເຫັນໃນຍາມເຈັບປ່ວຍແຕ່ເພິ່ນກໍມີຄວາມເຂັ້ມແຂງຂຶ້ນໃນພຣະເຈົ້າ( ຄລຕ 4: 13-15 ). ເມື່ອເພິ່ນເຈັບປ່ວຍ, ພວກເຮົາກໍໄດ້ອະທິຖານເພື່ອ, ຊອກຫາຢາ ແລະການປິ່ນປົວທີ່ຖືກຕ້ອງ, ແລະຍັງຕ້ອງມີຄວາມເຊື່ອແລະໄວ້ວາງໃຈໃນພຣະເຈົ້າອີກ ( ຣບກ 3: 17-18 ).

ໃນຖານະທີ່ພວກເຮົາເປັນຜູ້ທີ່ເຊື່ອພວກເຮົາຕ້ອງມີຄວາມໝັ້ນໃຈໃນການແບ່ງປັນຂ່າວປະເສີດ, ເພາະວ່າພຣະເຈົ້າມີຄວາມສັດຊື່ທ່ຽງທັມແລະມີຣິດອຳນາດທີ່ຈະເອົາຊະນະຕໍ່ຈິດໃຈຂອງຜູ້ທີ່ໄດ້ຍິນໄດ້ຟັງເຖິງເຣື່ອງຄວາມຈິງນີ້.

## 3. <u>ແຜນການຂອງທ່ານ</u> (ໂຣມ 15:20-24)

ຄວາມຕັ້ງໃຈແລະຄວາມມຸ້ງໝາຍທີ່ໂປໂລມີຄືຈະໄປປະກາດຂ່າວປະເສີດທົ່ວທຸກບ່ອນ ແມ້ແຕ່ໃນທີ່ຊຶ່ງເຂົາບໍ່ເຄີຍໄດ້ຍິນເຣື່ອງຂອງພຣະຄຣິດມາກ່ອນເລີຍ, ຫລືໃນສະຖານທີ່ບໍ່ເຄີຍມີໃຜສັ່ງສອນເຣື່ອງຂ່າວປະເສີດເລີຍ. ຜົນກຳໄລທີ່ໄດ້ຮັບຈາກການອອກໄປປະກາດກໍຄືນີ້ເປັນພຣະປະສົງຂອງພຣະເຈົ້າທີ່ຢາກຈະໃຫ້ພວກເຮົາເຮັດ: ໄດ້ຮັບພຣະພອນໃນການປະກາດຂ່າວປະເສີດເຣື່ອງຂອງພຣະເຢຊູຄຣິດແລະເຮັດໃຫ້ເຂົາກາຍມາເປັນສິດຈາກຄົນທຸກຊາດ (ໂດຍສະເພາະແລ້ວແມ່ນຊົນຊາດຊົນເຜົ່າຕ່າງໆ ທີ່ອາສັຍຢູ່ທຸກມຸມໂລກ. (ມທ 28: 18-20). ແລະຈະໄປເຖິງອີກ 200 ປະເທດທີ່ມີອຳນາດການປົກຄອງຄວບຄຸມຢູ່, ພວກຜູ້ຮຽນເຣື່ອງການປະກາດແກ່ຄົນທົ່ວໂລກຊຶ່ງມີປະມານ 11 ພັນ "ຊົນຊາດຊົນເຜົ່າ" ຫລືພວກເຜົ່າຕ່າງໆ ທີ່ມີຢູ່ທົ່ວໂລກອີກດ້ວຍ.

ຈົນເຖິງປັຈຸບັນນີ້, ສະພາສູງຂອງການປະກາດທຸກຊາດໃນໂລກໄດ້ສຳຫລວດແລ້ວມີປະມານ 6000 ກຸ່ມທີ່ຄົ້ນພົບແລ້ວໃນການອອກປະກາດຄັ້ງທີ່ຜ່ານມາ. ມີການສົມທຽບກັບຈຳນວນປະຊາກອນ 3.6 ໂກດແມ່ນເປັນຈຳນວນນ້ອຍທີ່ສຸດທີ່ໄດ້ພົບຫລືໄດ້ຍິນເຣື່ອງລາວຂ່າວປະເສີດນີ້. ທາງ Southern Baptists, ໂດຍ, ຜ່ານການອະທິຖານ, cooperative giving, and coordinate service, ແລະ ໄປທົ່ວເຖິງຄົນກຸ່ມນີ້ມາໃຫ້ພຣະຄຣິດ, ໄດ້ຈັດຕັດຕັ້ງກຸ່ມທີ່ມີຄວາມໝັ້ນຄົງ, ພ້ອມທີ່ຈະເປັນພະຍານໃນທ່າມກາງພວກຄຣິສຕຽນກັນເອງ. ໂດຍການອ້າງເຖິງການຈະສະເດັດກັບຄືນມາຂອງພຣະອົງ, ພຣະຄຣິດກ່າວວ່າ "*ຂ່າວປະເສີດເຣື່ອງແຜ່ນດິນຂອງພຣະເຈົ້າຈະໄດ້ປະກາດໄປທົ່ວໂລກໃຫ້ເປັນຄຳພະຍານແກ່ບັນດາປະຊາຊາດແລ້ວທີ່ສຸດປາຍຈະມາເຖິງ*" (ມທ 24:14). ພຣະເຈົ້າມີພຣະປະສົງຢາກໃຫ້ຄຣິສຕຽນໄດ້ມີການປະຕິບັດການໝັ້ນໝາຍໃນກຸ່ມຜູ້ປະກາດຈົນກວ່າພຣະເຢຊູຈະສະເດັດກັບມາ.

**ໂປໂລໄດ້ພົບອຸປສັກຂັດຂວາງຫລາຍຢ່າງໃນການປະກາດໃຫ້ແກ່ຄົນຕ່າງຊາດ; ຄືມີການຂັດຂ້ອງຫລາຍເທື່ອໃນ** ການທີ່ຈະມາຢາມພີ່ນ້ອງທີ່ກຸງໂຣມ. **ແຕ່ໂປໂລກໍໄດ້ເຮັດວຽກງານໃນເຂດແຂວງນີ້ຄື**ເພື່ອໃນການປະກາດໃນອະນາຄົດ, ຄື ການຝຶກສອນ, ແລະການໃຫ້ການໜູນໃຈແກ່ວິຫານທີ່ໄດ້ຕັ້ງຂຶ້ນໃໝ່ໆ. ການຕອບສນອງຕໍ່ອົງການປະກາດຂ່າວປະເສີດທີ່ໄດ້ມີການຮຽກເອີ້ນທີ່ຍາວນານສຳລັບການໃຫ້ຄຳສັນຍາໃນການປະກອບສ່ວນຂອງພວກເຮົາ, ໄດ້ຮັບຜົນຫລາຍແລະໄວອີກດ້ວຍຄືການອອກອາກາດຫລືການອົບຮົມເປັນລະຍະຍາວໃນອາທິດນຶ່ງຕິດຕໍ່ກັນໃນກຸ່ມໝູ່ບ້ານບາງບ່ອນ. ໃຫ້ມີການອົບຮົມອາຈານແລະຜູ້ນຳຢູ່ໃນໂບດ, ຍ່າງຄຽງຄູ່ກັບພີ່ນ້ອງ, ກັບອ້າຍເອື້ອຍແລະນ້ອງໃໝ່ໃນພຣະຄຣິດຄືຕົວຢ່າງຂອງຄວາມຮັກ, ແລະເປັນຜົນດີໃນພາກສ່ວນກັບພວກເຂົາໃນອະນາຄົດຄືການອອກໄປປະກາດຊັກຊວນ.

ທີ່ແນ່ນອນ, ຄືໂປໂລໄດ້ໃຫ້ການໜູນໃຈແກ່ພີ່ນ້ອງຄຣິສຕຽນທີ່ກຸງໂຣມທີ່ໄດ້ມີສ່ວນຮ່ວມໃນການຊ່ວຍເຫລືອ ໃນການອອກໄປ ໃນອະນາຄົດຂອງການປະກາດຂອງເພິ່ນ. ປໂຍກທີ່ໃຊ້ຄຳວ່າ ສົ່ງອອກໄປຕາມທິດທາງທີ່ຂ້າພະເຈົ້າໄດ້ວາງໄວ້ແລ້ວໂດຍທ່ານທັງຫລາຍ (ກຈກ 15: 3; 1 ກຣທ 16:6) ໃນການໃຫ້ຄວາມສະດວກຂອງໂບດທັງໝົດຄືການມີສ່ວນຮ່ວມ *ໃນການອອກໄປເຮັດວຽກງານ* ຂອງເພິ່ນໂດຍຜ່ານການອະທິຖານຂອງພີ່ນ້ອງເຫລົ່ານີ້, ຜ່ານການອະທິຖານ, ຊ່ວຍເຣື່ອງການເງິນ, ແລະມີຄວາມສົນໃຈສ່ວນຕົວທີ່ຈະມີສ່ວນຮ່ວມໃນການອອກໄປປະກາດທີ່ຈະເລີ້ມມີຂື້ນໃນປະເທດ **ສະເປນ**. ໂປໂລໄດ້ຂຽນໃນຕອນເລີ້ມຕົ້ນແລ້ວ, "ຖ້າບໍ່ມີຜູ້ໃດໃຊ້ເຂົາໄປເຂົາຈະປະກາດໄດ້ຢ່າງໃດ?" (ໂຣມ 10:15). ພວກເຮົາຈະບໍ່ອະທິຖານເປັນພຽງຄຳເວົ້າທີ່ມ່ວນອອນຊອນເທົ່ານັ້ນ; ຄືພວກເຮົາຈະ "ສົ່ງເຂົາໄປ" ໂດຍເອົາໃຈໃສ່ໃນຊີວິດການເປັນຢູ່ແລະໝາກຜົນທີ່ພວກເຂົາເກັບກ່ຽວໃນການປະກາດໄດ້ນຳອີກ.

Southern Baptists ໄດ້ມີການ "ເຂົ້າເປັນພາກສ່ວນ...ໃນພຣະຄຸນ" (ຟລປ1:7) ດ້ວຍອາສັຍຊຶ່ງກັນແລະກັນໃນການຊ່ວຍເຫລືອ Cooperative Program ອົງການ Lottie Moon Christmas Offering, ເພື່ອອົງການປະກາດນາງ ຊາດ. ຫ້ອງການຂອງອົງການປະກາດນາ ໆຊາດໄດ້ມີສ່ວນໃນການຮັບຜິດຊອບພວກຜູ້ປະກາດທີ່ໄດ້

ອອກໄປເຮັດວຽກງານນີ້ທີ່ກຳລັງຢູ່ໃນການພິຈາຣະນາ. ພ້ອມນີ້ຈະໄດ້ຮັບການຊ່ວຍເຫລືອເຣື່ອງການເງິນໂດຍຜ່ານອົງການ Cooperative Program, the Lottie Moon Christmas Offering ໄດ້ມີສ່ວນຖວາຍຄືເຄິ່ງນື່ງຂອງໂຄງການທັງຫມົດ. ການຖວາຍຂອງທ່ານໃນເດືອນທັນວານີ້ແມ່ນເປັນຄວາມຊົມຊື່ນຍິນດີທີ່ສຸດ, ພວກຜູ້ປະກາດຈື່ງຈະມີຄວາມສາມາດໃນການແບ່ງປັນເຣື່ອງຂ່າວປະເສີດໄດ້ດ້ວຍຄວາມຫມັ້ນໃຈແລະເຮັດວຽກງານຂອງກອງປະກາດທົ່ວໂລກໄດ້ຜົນດີ.

ພຣະເຈົ້າໄດ້ມີແຜນການທີ່ຈະເຮັດໃຫ້ຄົນທົ່ວໂລກໄດ້ຮູ້; ແຜນການຂອງພຣະອົງ, ທ່ານ, ຄອບຄົວ, ແລະໂບດຂອງທ່ານກໍໄດ້ມີສ່ວນ! ໃນຄອບຄົວຂອງທ່ານມີສ່ວນຄືໃນເວລາທີ່ທ່ານກຳລັງຮັບປະທານອາຫານຮ່ວມກັນກໍອາດຈະມີການແບ່ງປັນແລະເລົ່າເຣື່ອງຂອງຜູ້ປະກາດ ແລະວຽກງານທີ່ເຂົາເຈົ້າໄດ້ອອກໄປຢູ່ຕ່າງຖິ່ນຕ່າງດິນແດນ ແລະມີການອະທິຖານເພື່ອໂດຍອອກຊື່ຂອງພວກເຂົາ, ຈະປືກສາກັບຄອບຄົວໃນການທີ່ຈະມີສ່ວນໃນການຖວາຍເທົ່າໃດໃຫ້ Lottie Moon Christmas Offering. ໂບດຂອງທ່ານອາດຈະມີສ່ວນຄືໄດ້ຮັບການມາຢ້ຽມຢາມຂອງພວກຜູ້ປະກາດພຣະທັມຈາກຕ່າງປະເທດແລະອື່ນ ໆ ໄດ້ມາແບ່ງປັນແລະເລົ່າເຣື່ອງການເຮັດວຽກຂອງພວກເຂົາໃຫ້ທ່ານໄດ້ຮູ້. ມີແຜນທີ່ຈະມີສ່ວນຮ່ວມໃນການປະກາດ ຄືການອອກໄປກັບຄະນະຮ່ວມກຸ່ມໃນອະນາຄົດທີ່ທ່ານສາມາດຈະເຮັດໄດ້ກໍເປັນພາກສ່ວນເຊັ່ນດຽວກັນ.

4. <u>ການອະທິຖານຂອງທ່ານ</u> (ໂຣມ 15:30-35)

ບໍ່ໄກຈາກສຸດທ້າຍເທົ່າໃດ, ໂປໂລໄດ້ຫນູນໃຈໃຫ້ພີ່ນ້ອງທີ່ຢູ່ກຸງໂຣມໃຫ້ເລັ້ມເຂັ້ມງວດໃນການອະທິຖານ. ການອະທິຖານແມ່ນພະລັງທີ່ຈະເຮັດໃຫ້: ພີ່ນ້ອງທັງຫລາຍເຮົາຂໍວິງວອນ...**ໂດຍພຣະຜູ້ເປັນເຈົ້າພຣະເຢຊູຄຣິດແລະໂດຍຄວາມຮັກຂອງພຣະວິນຍານ.** ເພາະໂປໂລຮູ້ວ່າການອະທິຖານໄດ້ມີສ່ວນຫລາຍກວ່າພຽງເລັກນ້ອຍແຕ່ເຫມາະສົມໂດຍຈະຊຶມຊາບຜ່ານຫົວແລະແນໃສ່ຈຸດມຸ້ງຫມາຍຄືຟ້າສວັນ. ໂດຍໄດ້ຫລິງເຫັນແລ້ວວ່າການອະທິຖານທີ່ຈິງຈັງແລະຊັກຊວນພີ່ນ້ອງຢູ່ທີ່ກຸງໂຣມໃຫ້ມີການທ້ອນໂຮມມີສ່ວນກັບເພິ່ນ, ຄວາມຫມາຍແມ່ນພວກເຂົາຈະໄດ້ມີສ່ວນໃນການເກັບກ່ຽວຫົວໃຈແລະຈິດວິນຍານໂດຍຜ່ານການອະທິຖານຮ່ວມກັນ. ໂດຍຜ່ານການອະທິຖານນີ້ເຮົາກໍຈະມີຄວາມຫມາຍໃນສ່ວນຮ່ວມກັບວຽກງານທີ່ພວກຜູ້ອອກໄປຮັບໃຊ້.

ການອະທິຖານທີ່ໄດ້ຮັບຜົນດີແມ່ນການມີສ່ວນຮ່ວມໃນການຕັດສິນໃຈໃນເຫດການທີ່ຈະເກີດຂື້ນ. ເພິ່ນໄດ້ຮ້ອງຂໍໃຫ້ພີ່ນ້ອງຜູ້ທີ່ເຊື່ອທີ່ຢູ່ທີ່ກຸງໂຣມໃຫ້ອະທິຖານ (1) ເພື່ອເພິ່ນຈະໄດ້ພົ້ນຈາກການຂົ່ມເຫງຂອງໃນປະເທດຢູເດັຽ; (2) ເພື່ອການປະກາດໃຫ້ໄດ້ຕອບຮັບດ້ວຍຄວາມຍິນດີຈາກພີ່ນ້ອງທີ່ກຸງເຢຣູຊາເລັມ; ແລະ (3) ເພື່ອການມາຢ້ຽມຢາມພີ່ນ້ອງທີ່ທີ່ກຸງໂຣມໃຫ້ໄດ້ຮັບແຕ່ຄວາມຊື່ນຊົມຍິນດີຮ່ວມກັນ. ໃນການເປັນພະຍານອາດຈະມີສິ່ງທີ່ບໍ່ໄດ້ຄິດໄວ້ເກີດຂື້ນ, ທັງສາມຂໍ້ນີ້ມີຄຳຕອບແລ້ວຢູ່ໃນ ( ກຈກ 23: 11-22; 28: 16-31 ). ພຣະເຈົ້າຊົງໄດ້ຍິນຄຳອະທິຖານຂອງໄພ່ພົນຂອງພຣະອົງທີ່ຈະໄດ້ມີພາກສ່ວນໃນການອະທິຖານເພື່ອວຽກງານຂອງພຣະເຈົ້າແລ້ວ.

**( ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org - ແປແລະຮຽບຮຽງໂດຍ ອ.ຣ )**